# ຄຳຮຽກຮ້ອງ ຂອງກະຊວງປ້ອງກັນປະເທດ

ເຖິງ ເພື່ອນນາຍແລະພົລທະຫານ ຂອງຂບວນການແນວລາວ ຂບວນການລາວແດງ ແລະຂບວນການລາວອິສຣະ ໃນອາດີດທີ່ເຄີຍຮ່ວມສຸກຮ່ວມທຸກກັນມາ ຕຣອດ-30-ປີ

ພວກເຮົາຫວັງວ່າທ່ານຄົງມີສຸຂພາບແຂງແຮງ ໃນການປະຕິບັດໜ້າທີ່ວຽກງານສະດວກດີທຸກປະການ ພວກເຮົາແລະບັນດາທ່ານ ໃນສູນກາງຂອງພວກເຮົາ ມີສຸຂພາບແຂງແຮງດີທຸກຄົນ

ສ່ວນຈົດໝາຍຂອງທ່ານທີ່ທ່ານໄດ້ສົ່ງມາໃຫ້ພວກເຮົາໄດ້ຮັບແລ້ວຂໍຂອບໃຈຫລາຍໆ ທີ່ທ່ານໄດ້ພະຍາຍາມຂຽນຈົດໝາຍມາຖາມຂ່າວຄາວຂອງພວກເຮົາ ແລະໄດ້ເຫລົ່າສະພາບການບາງຢ່າງໃຫ້ພວກເຮົາຮູ້

**<u>ທ່ານນາຍພົລນາຍພັນ ທີ່ຮັກແພງ ທັງສາມຂບວນການ</u>**

ທາງສູນກາງແລະພວກເຮົາເອງຮູ້ສຶກດີໃຈຫລາຍ ທີ່ທ່ານໄດ້ບຸກໜ້າປະຕິບັດໜ້າທີ່ ທີ່ປະຊາຊົນໄດ້ມອບໝາຍໃຫ້ຢູ່ໃນຣັຖບານ ພັກຄອມມູນິສປະສົມແຫ່ງຊາດແຕ່ປີ-1975-ເປັນຕົ້ນເຖິງປະຈຸບັນ ທ່ານໄດ້ຕັ້ງໃຈເຮັດໜ້າທີ່ວຽກງານຂອງຕົນຢ່າງບໍ່ຮູ້ອິດຮູ້ເມື່ອຍ ເພື່ອປະກອບສ່ວນອັນສຳຄັນເຂົ້າໃນພາຣະກິດຂອງປະເທດຊາດ ເປັນຕົ້ນນັບແຕ່ທ່ານໄດ້ຮັບການແຕ່ງຕັ້ງ ໃຫ້ເປັນຜູ້ກຳກະຊວງປ້ອງກັນປະເທດແລະທັງເປັນຜູ້ຮັບຜິດຊອບໃນກິງຮອບດ້ານ ຂອງກຳລັງທັບທັງສາມຂບວນການປ້ອງກັນຊາດ ເພື່ອປະຕິບັດພາຣະບົດບາດດັ່ງກ່າວ ທ່ານໄດ້ໃຊ້ທຸກຄວາມສາມາດ ໝູນໃຊ້ບັນດານະໂຍບາຍອັນເດັດຂາດຖືກຕ້ອງແລະຍຸດໂທບາຍອັນຄອ່ງແຄ້ວ ອ່ອນໂຍນຂອງສູນກາງຢ່າງມີຫົວຄິດປະດິດສ້າງແລະມີໃຫວພິກ ທ່ານໄດ້ໃຊ້ຫລາຍວິທີການອັນສຳຄັນ ເພື່ອລົບລ້າງກົງຈັກທະຫານຝ່າຍ ຄອມມູນິສແລະປັດເຄັ່ງພວກຜເດັດການຄອມມູນິສ ອອກຂາກວົງການທະຫານສາມຂບວນການ ແລ້ວດູດດຶງເອົານາຍແລະພົລທະຫານເປັນຕົ້ນແມ່ນນາຍແລະພົລທະຫານຊັ້ນຕ່ຳ ໃຫ້ຢູ່ໄຕ້ການບັງຄັບບັນຊາຂອງທ່ານເອງ ອັນໄດ້ເຮັດໃຫ້ພາຍໃນຖັນແຖວຂອງກອງທັບທະຫານຫວຽດນາມ ເຊິ່ງເປັນເຄື່ອງມືອັນສຳຄັນຕ້ານການຕໍ່ສູ້ ປະຕິວັດຂອງປະຊາຊົນເຮົາຖືກພັນແຢກຢ່າງໃວວາ ມາເຖິງປະຈຸບັນນີ້ອາດຈະເວົ້າໄດ້ວ່າ ກຳລັງຝ່າຍຄອມມູນິສຫວຽດນາມ ໄດ້ເປື້ອງຕົ້ນແຕກສລາຍແລະນັບມືນັບຈະແຕກທະລາຍ ໂດຍສະເພາະແມ່ນພວກນາຍທະຫານຂອງຂບວນການລາວແດງແລະແນວລາວທີ່ບໍ່ມັກຣະບອບຄອມມູນິສຫວຽດນາມ ທີ່ເຄີຍຕ້ານການປະຕິວັດ ສູ້ຢັນກັບທ່ານໃນການປະຕິບັດສັນຍາອະນຸສັນຍານັ້ນ ແກວມາແບ່ງແຍກໃຫ້ລາວຕົກຢູ່ໃນຄວາມປະຣະໄຊ ຈົ່ນເຖິງປະຈຸບັນນີ້ ໄດ້ປະຣະໄຊຢ່າງໜັກໜ່ວງແລະຈຳຕ້ອງຕົກໂດ່ນແບບບໍ່ມີເງິນໄຊ້ ທີ່ຜູ້ໃດໄດ້ຮັບເປັນຂ້າຣາຊການມານັ້ນເທົ່າປະຈຸບັນນີ້ ບ່າງທ່ານກໍ່ໄດ້ໄປຢູ່ຕ່າງປະເທດ

ແຕ່ພາຍໃນກະຊວງທີ່ທ່ານຮັບຜິດຊອບ ກໍ່ໄດ້ເລີ້ມມີການປັບປຸງຕໍ່ປະເທດ ເປັນຕົ້ນຕໍ່ໂຊວຽດຫວຽດນາມແລະຈີນ ກໍ່ໄດ້ສູ້ຢັນບັນດາ ບັນຫາທີທູດໂຊວຽດ ຫວຽດນາມແລະຈີນ ເຄີຍໄດ້ຖົກຖຽງກັນກັບທ່ານ ແຕ່ລັງເມື່ອທີ່ຮູ້ກັບພວກເຂົານັ້ນ ທ່ານກໍ່ໄດ້ສແດງຈິດໃຈທະນົງອົງອາດກ້າຫານ ແລະມີລັກສະນະບັງຄັບໃຫ້ພວກເຂົາຕ້ອງປະຕິບັດ ຕາມຄວາມສນອງຂອງພວກເຂົາ

ສິ່ງເຫລົ່ານັ້ນໄດ້ເປັນການປະກອບສ່ວນອັນສຳຄັນທີ່ສຸດ ເຂົ້າໃນໜ້າປວັດສາດອັນສງ່າລາສີຂອງຊາດເຮົາ ທາງສູນກາງແລະຄນະຂອງພວກເຮົາເອງ ຂໍສນັບສນູນ ທ່ານຢ່າງສຸດໃຈ

ທ່ານຄົງຮູ້ດີ ສະພາບການໃນປະເທດເຮົາໄດ້ສຸກງອມ ແລະໄດ້ສ້າງກາລະໂອກາດແຫ່ງສະພາວະການປະຕິວັດ ທີ່ອຳນວຍຄວາມສະດວກທີ່ສຸດໃຫ້ແກ່ພວກເຮົາ ປະຊາຊົນເຮົາແລະພົລທະຫານຝ່າຍສາມຂບວນຢູ່ໃນເຂດບ່ອນສຳຄັນນັ້ນ ໄດ້ສາມັກຄີກັນເພື່ອຈະລຸກຮື້ຂື້ນຢຶດອຳນາດ ທັບມ້າງກົງຈັກປົກຄອງ ກົງຈັກທະຫານແກວເໜືອຜເດັດການຄອມມູນິສລາວ ແລະພວກເຮົາທັງສາມຂບວນການທີ່ໄດ້ສ້າງຕໍ່ສູ້ມາເປັນເວລາ-30-ປີນັ້ນ ເພື່ອປອ້ງກັນພວກຜເດັດການທີ່ປາບປາມປະຊາຊົນ ພວກເຮົາຕອ້ງຕັ້ງກຳລັງປອ້ງກັນຊາດ ຍາດສິດເປັນເຈົ້າຕົນເອງຢ່າງເຕັມສວ່ນ ຄວາມສາມາດຂອງມະຫາຊົນແມ່ນຍິ່ງໃຫ່ງແທ້ ແລະຈາກນັ້ນເຫັນໄດ້ຈະແຈ້ງວ່າປະຊາຊົນລາວເຮົາທີ່ເບື່ອໜ່າຍຣະບອບຜເດັດການຄອມມູນິສແກວຫວງຽດມິນຢ່າງເລິກເຊິ່ງ ມີຄວາມອາດສາມາດໂດຍສົມບູນໃນການຢຶດອຳນາດການປົກຄອງ ໃຫ້ສຳເຣັດການປະຕິວັດຊາດເອົາປະຊາທິປະໄຕໃນທົ່ວປະເທດ ແມ່ນບ່ອນສັດຕຣູຂອງຊາດຂອງປະຊາຊົນເຮົາ ບໍ່ປະກົບອຸບາຍອັນມືດມົນຂອງເຂົາງ່າຍ ເຂົາເຈົ້າຍັງກໍ່ຄວາມຫວັງຢາກໃຫ້ພວກເຮົາຫລາຍປະການ ແລະດວ້ຍວິທີການເລັ້ລ່ຽມອັນເລິກແລບແນບນຽນ

ສະນັ້ນ ດ້ານໜຶ່ງພວກເຮົາຈະຕອ້ງມີສະຕິຣະວັງຕົວສູງ ແລະດ້ານໜຶ່ງອີກແມ່ນຍິ່ງຈະຕອ້ງເດັດດຽວກ້າຫານລົບລ້າງ ກຳລັງທະຫານຂອງສັດຕຣູຢ່າງຊິ້ນເຊີງ ສ້າງຕັ້ງກຳລັງປະກອບອາວຸດດວ້ຍປະຊາຊົນຂຶ້ນໃຫ້ໃວ ໃນການທັບມ້າງອຳນາດການປົກຄອງຣະບອບຄອມມູນິສແກວລາວ ບັນຫາລົບລ້າງກົງຈັກການທະຫານຂອງພວກເຂົາ ແມ່ນມີຄວາມສຳຄັນເປັນພິເສດ ເພາະມັນເປັນບ່ອນອີງຕົ້ນຕໍຂອງກຳລັງຮຸນແຮງຝື້ນປະຕິວັດຂອງສັດຕຣູ ຖ້າມີແຕ່ທັບມ້າງອຳນາດການປົກຄອງຂອງຣະບອບຄອມມູນິສຫວຽດນາມແລະຜເດັດການລາວແກວດ້ານດຽວ ພັດບໍ່ລົບລ້າງກົງຈັກການທະຫານຂອງສັດຕຣູ ແລ້ວກໍ່ມີໄພອັນຕຣາຍທີຣະບອບຄອມມູນິສແກວລາວ ເວົ້າລວມແລະຈັກພັດທອ້ງທີ່ນທີ່ຮັບໄຊ້ຜເດັດການຫວຽດນາມ ເວົ້າສະເພາະແລະພວກແນວລາວສ້າງຊາດຂອງແກວ ຈະຫາທຸກໂອກາດກ່າວໂຈມຕີອຳນາດການປົກຄອງໃນຣະບອບປະຊາທິປະໄຕ ບົດຮຽນມີຢູ່ມາແລ້ວມັນເປັນໜັງ ສືຣິມາ ແລະໃນບ່ອນອື່ນກໍ່ໄດ້ຢືນຢັນຫລັກການດັ່ງກ່າວຢ່າງຈະແຈ້ງແລ້ວ ດັ່ງນັ້ນໃນກາຣະໂອກາດອັນຫາຍາກນີ້ ພວກເຮົາຕອ້ງລົບລ້າງກອງທະຫານຝ່າຍແກວຫວຽດມິນຢ່າງຊິ້ນເຊີງ ໂດຍສົມທົບຫລາຍວິທີການ ມີດັ່ງນີ້

-1) ຣິດຍອມກຳລັງທັບຂອງສັດຕຣູ ດວ້ຍວິທີການປົດປອ່ຍອອກຈາກກອງທັບ ຍົກຍ້າຍໄປເປັນກອງກໍ່ສ້າງກອງຜຣິດຜົນສະເພາະຖັນແຖວນາຍທະຫານ ເປັນຕົ້ນຂັ້ນນາຍພົລ ນາຍພັນຕອ້ງຈຳແນກໃຫ້ຄັກແນ່ ແລະມີມາຕການອັນເດັດຂາດຕໍ່ພວກຜເດັດການຄອມມູນິສ ພວກເຮົາຕອ້ງດຳເນີນການສຶກສາອົບຣົມດັດສ້າງ ພວກເຄິ່ງໆ ກາງໆ ນັ້ນໄດ້

ເພາະຖັນແຖວນາຍທະຫານ ເປັນກະດູກສັນຫລັງຂອງກອງທັບຫຸ່ນແກວຫວຽດມິນ

-2) ຍຸບບັນດາກົງຈັກບັນຊາການທະຫານ ຂອງຝ່າຍແນວລາວສ້າງຊາດຄອມມູນິສ ເຊັ່ນຍຸບກອງບັນຊາການສູງສຸດດ້ວຍວິທີເອົາເຂົ້າກັບກະຊວງປ້ອງກັນປະເທດ ຍຸບພາກທະຫານຕ່າງໆແລະເຂດຍ່ອຍ ຈັດຕັ້ງກອງບັນຊາການທະຫານແຂວງຂຶ້ນ ຕາມແບບພວກເຮົາທຳມາ

-3) ອອກຄຳສັ່ງໃຫ້ທຸກກົມກອງນຳເອົາອາວຸດທັງໝົດເຂົ້າສາງ ເອົາບັນດາພື້ນຖານວັດຖຸແລະວິທະຍາການມາຮັບໄຊ້ກອງທະຫານຂອງພວກເຮົາ

ບັນດາບັນຫາທີ່ກ່າວມານີ້ ເປັນບັນຫາທີ່ຫຍຸ້ງຍາກສັບສົນພໍສົມຄວນ ເພາະມັນເປັນການຕໍ່ສູ້ກັບແກວແລະພວກຜເດັດການລາວຄອມມູນິສ ພວກນາຍພົລນາຍພັນແລະກົມນາຍົກເອງ ສະເພາະທ່ານຕ້ອງຢຶດໝັ້ນໃນທັດສະນະຫລັກໝັ້ນປະຕິວັດແທ້ຈິງ ຈຶ່ງແກ້ບັນຫາໄດ້ດີ ໆພວກເຮົາຕ້ອງເສີມຂຍາຍຫົວຄິດປະດິດສ້າງພະຍາຍາມຄົ້ນຄິດເຫັນວ່າ ຄວນຈະໄຊ້ຄຳສັ່ງຂອງກະຊວງປ້ອງກັນປະເທດແນວໃດເພື່ອເປັນບ່ອນອີງໃຫ້ທ້ອງຖິ່ນຕ່າງໆ ດຳເນີນວຽກງານສະດວກດີ ໆໃນດ້ານກໍ່ຕັ້ງສະມາຊິກວິທີການອະທິບາຍ ໃຫ້ນາຍົກມາເຫັນດ້ວຍນຳ ໆທ່ານຈະເວົ້າແຈ້ງນຳທ່ານປະທານປະເທດວ່າ ກອງທັບຫວຽດນາມເມື່ອກ່ອນ ແມ່ນຈັກພັດທ້ອງຖິ່ນຄອມມູນິສສ້າງຂຶ້ນເພື່ອປາບປາມປະຊາຊົນ ໆພວກເຂົາໄດ້ກໍ່ໂທດກັມອັນມາກມາຍກາຍກອງ ກອງທັບບໍ່ສົມເປັນກອງທັບຂອງແນວລາວຮັກຊາດຍອັນແນວນັ້ນ ໆປະຊາຊົນແລະພົນທະຫານກໍ່ຄືນາຍທະຫານຊັ້ນຕ່ຳເຂົາກຽດຊັງເບື່ອໜ່າຍ ໆເຂົາຈຶ່ງຈະພ້ອມກັນລຸກຮື້ຂຶ້ນໂຄ່ນລົ້ມນາຍຜເດັດການ ເຊິ່ງລ້ວນແຕ່ຜູ້ທີ່ຫາກມີເງິນກິນມີຄຳຄ້າຂາຍ ສ່ວນກົງຈັກບັນຊາການຜເດັດການທະຫານທຸກຂັ້ນກໍ່ບໍ່ເໝາະສົມ ເພາະມັນເປັນກົງຈັກບັນຊາການແບບອາດຍາສິດ ເປືອງເງິນເປືອງຄຳຂອງຊາດລ້າໆ ເພາະສະນັ້ນຕ້ອງມີຄວາມຈຳເປັນ ຕ້ອງໄດ້ດັດແປງສ່ວນປະກອບຂອງກົງຈັກບັນຊາການທະຫານທຸກຂັ້ນໃຫ້ເໝາະສົມ ສ້າງກອງທັບຂຶ້ນໃໝ່ໃຫ້ເປັນກອງທັບແຫ່ງຊາດອັນແທ້ຈິງທີ່ເປັນຮົ້ວຂອງຊາດແລ້ວຍັງປ້ອງກັນຜົນປະໂຍດຂອງປະຊາຊົນ ເພື່ອບໍ່ໃຫ້ມີກຳລັງກອງຫລອນກອງໂຈນແລະທະຫານເມືອງເປັນຕົ້ນ

ໃນວຽກງານດັ່ງກ່າວມີຄວາມຈຳເປັນ ຕ້ອງໄດ້ຮັບການຮ່ວມໄມ້ຮ່ວມມືຂອງກອງທັບ ທັງສາມຂບວນການຂອງພວກເຮົາໃນອາດີດ ຄືຂບວນການລາວອິສຣະ ຂບວນການລາວແດງ ແລະຂບວນການແນວລາວຮັກຊາດ ທີ່ຢາກປົດປ່ອຍປະຊາຊົນອອກຈາກແອກເຫລັກຂອງກຸມຜເດັດການຕ່າງໆ

ສ່ວນກ່ຽວກັບການສ້າງກຳລັງປະກອບອາວຸດທາງປັນຍາ ປະຕິວັດຂອງປະຊາຊົນໃນສະເພາະໜ້ານີ້ ໆພວກເຮົາອາດຈະປະກອບອາວຸດທາງປັນຍາໃຫ້ປະຊາຊົນ ໆເປັນຕົ້ນແມ່ນພວກຊາວໜຸ່ມ ເພື່ອຮ່ວມກັບກຳລັງຂອງພວກເຮົາ ທີ່ຮັກສາຄວາມສງົບໃນບັນດາຕົວເມືອງ ໆພວກເຮົາກໍ່ຈະເລືອກຝ່າຍທະຫານບາງກົມກອງຂອງຝ່າຍລາວຄອມມູນິສ ທີ່ພວກເຂົາເຈົ້າບໍ່ເຂົາໃຈໃນການສ້າງຕັ້ງການປົດປ່ອຍຜເດັດການ ອອກຈາກອຳນາດ

ເພື່ອຫັນເຂົ້າມາເປັນກຳລັງປະກອບອາວຸດທາງປັນຍາຂອງພວກເຮົາ

ນອກຈາກນັ້ນທາງຄນະ ຂບວນການສາມເຫລີ່ຳທັບ ຍັງລວບລວມຄົ້ນຄົ້ວແຜນການ ເພື່ອສ້າງກອງທັບປົດປ່ອຍຣະບອບຄອມມູນິສອອກຈາກປະເທດອອກປະຊາຊົນລາວ ກອງທັບ ຕອ້ງເປັນກອງຮັກສາຊາດ ຮັກສາສາສນາ ຮັກສາພຣະມະຫາກະສັດ ຮັກສາປະຊາຊົນ ຸກອງ ກຳລັງປະກອບອາວຸດທາງປັນຍາປະຕິວັດຂອງປະຊາຊົນ ເອົາເຂົ້າກັນໃຫ້ກາຍເປັນກອງທັບ ແຫ່ງຊາດທີ່ແທ້ຈິງ ຸເພື່ອປົກປັກຮັກສາປະເທດຊາດຮັກສາປະຊາຊົນ ໃນຂັ້ນຕໍ່ໄປ

ຕາມຂ່າວທີ່ພວກເຮົາຕິດຕາມໄດ້ນັ້ນ ຸເຫັນວ່າ ນາຍພົລ ຄຳໄຕ ສີພັນດອນ ແມ່ນມີການ ຕິດຕໍ່ພິເສດ ຂອງຂບວນການສາມເຫລີ່ຳຂອງພວກເຮົາ ກັບພວກທີ່ໂຕນໜີທີ່ໄປເປັນປະຕິການ ຢູ່ຕ່າງປະເທດ ໂດຍສະເພາະຍັງຕິດຕໍ່ພິເສດ ແລະພວກເຂົາກໍ່ຍັງມີການກະຕຽມເພື່ອໃນເວລາ ອັນເໝາະສົມ ທ່ານ ບຸນຍັງ ກໍ່ເໝືອນດຽວກັນ ທ່ານຈູມມະລີ ຫວ່າງແລ້ວກໍ່ມີການຕິດຕໍ່ພົວ ພັນ ກັບພວກສາມເຫລີ່ຳແລະພວກປະຕິການຢູ່ນອກປະເທດ ຝ່າຍສີສວາດແກ້ວບຸນພັນແລະ ສົມສວາດ ເລ່ງສວັດ ພອ້ມນາຍົກບົວສອນ ບຸບຜາວັນ ເຂົາເອງກໍ່ຈະໂຕນໃນເມື່ອຈຳເປັນ ດັ່ງນັ້ນ ໃນການເຮັດວຽກເຮັດງານນຳພວກນີ້ ທ່ານຕອ້ງມີສະຕິລະວັງຕົວແທ້ໆ

ທາງສູນກາງສາມເຫລີ່ຳທັບຂອງພວກເຮົາ ເຊື່ອແນ່ວ່າ ທ່ານຈະເຮັດຫລອ້ນໜ້າທີ່ ອັນເປັນປວັດສາດດັ່ງກ່າວສຳເດັດຜົນຢ່າງດີ

ສຸດທ້າຍ ພວກເຮົາຂໍອວ່ຍພອນໃຫ້ທ່ານ ຈົ່ງມີສຸຂພາບແຂງແຮງ ສືບຕໍ່ເຮັດໜ້າທີ່ໃຫ້ມີຜົນສຳເຣັດ ບຸກໜ້າຢືນກ້າວຂຶ້ນ ຍາດເອົາໄຊຊະ ນະໃໝ່ໃຫ່ຽຫລວງ ມາໃຫ້ປວງປະຊາຊົນ

**<u>ສະບາຍດີ</u>**

**<u>ໂດຍຄວາມຮັກແພງ</u>**

**<u>ນະຄອນວຽງຈັນ ວັນທີ -25 –6 -2009</u>**

***<u>ສາມຂບວນການເຫລີ່ຳທັບ ຕໍ່ຕ້ານຜເດັດການຄອມມູນິສ</u>***

*ສ ທ ກົມມະແສງ*